ບົດລາຍງານປະຈຳໄຕມາດ3 2016

The Third Quarter Report



ສຸວັນນີ
SOUVANNY
Home center

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONGTONGSAVAT RD., BAN PHONGTONGSAVAT, CHANTHABULY DISTRICT, VTE., LAO PDR
OFFICE TEL: (85621) 415645, FAX / TEL: (85621) 262 984 ; WEBSITE:SOUVANNY.COM

ລາຍລະອຽດ/Contents

- ປະຫວັດຄວາມເປັນມາຂອງ ສຸວັນນີ/ History of Souvanny
- ການດຳເນີນທຸລະກິດ ແລະ ຜົນການດຳເນີນງານປະຈຳໄຕມາດ 3 ປີ 2016 / Summary Business Operation of the third quarter 2016
- ວຽກງານດ້ານການຕະຫຼາດ/ Marketing
- ວຽກງານດ້ານບຸກຄະລາກອນ/ Human Resourcet
- ວຽກງານດ້ານຍຸດທະສາດອົງກອນ/ Strategy of the Company

ໂຄງຮ່າງການຈັດຕັ້ງ ສະມາຊິກສະພາ
ບໍລິຫານ
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
Board of Directors of SVN



ທ່ານ ອຸ່ນ ຫລ້າສຸກັນ
Mr. Ounh lasoukanh
ປະທານສະພາບໍລິຫານ
Chairman/chairman of Audit Committee



ທ່ານ ວັດດານາ ສຸຄະບັນດິດ
Mr. Waddana Soukbandith
ຮອງປະທານ ສະພາບໍລິຫານ
Vice Chairman / CEO



ທ່ານ ພັນໂນລາ ສຸຄະບັນດິດ
Mr. Phannola Soukbandith
ຮອງປະທານ ສະພາບໍລິຫານ
Vice Chairman/CFO



ທ່ານ ຄຳກົ້ງ ລ່ຽມ ພະຈັນ
Mr. khamkong Liemphrachanh
ສະມາຊິກສະພາ ບໍລິຫານ
Board Members



ທ່ານ ປະດິດ ວົງເສນາ
Mr. padith Vongsena
ສະມາຊິກສະພາ ບໍລິຫານ
Board Members



ທ່ານ ກິດສະດາ ສຸຄະບັນດິດ
Mr. kotsada Soukbandith
ສະມາຊິກສະພາ ບໍລິຫານ
Board Members / COO



ທ່ານ ວິທູນ ສຸຣິຍະວະນາກຸນ
Mr. Witoon Suriyawanakunl
ສະມາຊິກສະພາ ບໍລິຫານ
Board Members



ທ່ານ ວະຣິດ ຈິນຕະນາວັນ
Mr. Varith Chintanawan
ສະມາຊິກສະພາ ບໍລິຫານ
Board Members



ທ່ານ ນາງ ປະພັດສອນ ສຸຄະບັນດິດ
Ms. Paphatsone Soukbandith
ສະມາຊິກສະພາ ບໍລິຫານ
Board Members

SOUVANNY Home Center

ບົດລາຍງານປະຈຳໄຕມາດ 3

2016

➢ **ເປົ້າໝາຍຫຼັກຂອງການດຳເນີນທຸລະກິດ/ The Core Business Operation**

- ວິໄສທັດ/Vision

ສ້າງຕົນເອງໃຫ້ເປັນບໍລິສັດຊັ້ນນຳໃນການຄ້າວັດສະດຸກໍ່ສ້າງ ແລະ ຕົກແຕ່ງເຮືອນທີ່ທັນສະໄໝໃນ ສປປ ລາວ ກ້າວເຊື່ອມໂຍງສູ່ອາຊຽນ.

- ພາລະກິດ/Mission

ພັດທະນາດ້ານສິນຄ້າ ແລະ ບໍລິການໃຫ້ໄດ້ມາດຕະຖານ, ມີຄວາມທັນສະໄໝເພື່ອມຸ່ງໝັ້ນສູ່ຄວາມເປັນເລີດດ້ານບໍລິການ ແລະ ພັດທະນາບຸກຄະລາກອນໃຫ້ມີຄວາມຮູ້ ຄວາມສາມາດ ໃນການຮັບມືກັບພາລະໜ້າທີ່ອັນໃໝ່ທີ່ໃຫຍ່ກວ່າເກົ່າ ຂະຫຍາຍທຸລະກິດໃຫ້ກະຈາຍໄປທົ່ວປະເທດ ເພື່ອຍາດແຍ່ງໂອກາດໃນການທີ່ເປັນຈຸດເຊື່ອມຕໍ່ທາງພາກພື້ນລະຫວ່າງ ສປ ຈີນ ແລະ ອາຊຽນ ປະກອບສ່ວນຢ່າງຕັ້ງໜ້າໃນການສ້າງສາພັດທະນາສັງຄົມ ແລະ ປະເທດຊາດ.

ປະຫວັດຄວາມເປັນມາຂອງ ສຸວັນນີ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງຕໍ່ໄປນີ້ເອີ້ນວ່າ ("ບໍລິສັດ" ຫຼື "SVN") ດຳເນີນທຸລະກິດຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົກແຕ່ງພາຍໃນ ເຊັ່ນ: ກະໂລ, ສຸຂະພັນ, ນ້ຳສີ, ວັດສະດຸຕົກແຕ່ງບ້ານ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ, ເຟີນີເຈີ ພາຍໃຕ້ ການສິນຄ້າ Modernform ແລະ ຍັງເປັນຕົວແທນຈຳໜ່າຍພ້ອມໃຫ້ບໍລິການຕິດຕັ້ງ, ສ້ອມແປງຂັ້ນໄດເລື່ອນ ແລະ ລິບ ພາຍໃຕ້ ການສິນຄ້າ Mitsubishi ພຽງຜູ້ດຽວໃນ ສປປ ລາວ. ລວມທັງ ການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າ ເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ-ຫ້ອງນ້ຳ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ. ສິນຄ້າສ່ວນຫຼາຍນຳເຂົ້າຈາກຕ່າງປະເທດເປັນສິນຄ້າທີ່ມີຄຸນນະພາບ ຍີ່ຫໍ້ສິນຄ້າທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບລະດັບສາກົນ ຫຼາຍກວ່າ 400 ຍີ່ຫໍ້; ເຊິ່ງມີສິນຄ້າຫຼາຍກວ່າ 30,000 ລາຍການ ໂດຍມີລະບົບໂປຣແກຣມຄອມພິວເຕີທີ່ທັນສະໄໝໃນການຈັດການດ້ານການຈຳໜ່າຍ ແລະ ຄວບຄຸມສິນຄ້າໃນສາງຢ່າງມີປະສິດທິພາບ. ສິນຄ້າແບ່ງອອກເປັນ 7 ກຸ່ມ 17 ປະເພດຜະລິດຕະພັນ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າກ່ຽວກັບການກໍ່ສ້າງ ແລະ ຕົກແຕ່ງອາຄານ ພາຍໃຕ້ຄຳຂວັນທີ່ວ່າ: "ຍົກລະດັບສິນຄ້າ ແລະ ບໍລິການໃຫ້ມີຄຸນນະພາບ ສົ່ງມອບຖືກຕ້ອງ ຄົບວົງຈອນ ທັນເວລາ ສ້າງຄວາມເພິ່ງພໍໃຈໃຫ້ລູກຄ້າ ພັດທະນາຢ່າງຕໍ່ເນື່ອງ". ການຈັດຈຳໜ່າຍສິນຄ້າຮູບແບບທັນສະໄໝ ພາຍໃນສູນສະແດງສິນຄ້າຂະໜາດໃຫຍ່ (Showroom) ພາຍໃຕ້ເຄື່ອງໝາຍການຄ້າ "ສຸວັນນີ" (Souvanny) ທີ່ໃຫຍ່ເປັນອັນດັບໜຶ່ງໃນ ສປປ ລາວ.

ຮ້ານ ສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ໂດຍ ທ່ານ ນາງ ສຸວັນນີ ສຸຄະບັນດິດ (ທ່ານ ນາງ ສຸວັນນີ), ທ່ານ ວັດດານາ ສຸຄະບັນດິດ (ທ່ານ ວັດດານາ) ແລະ ທ່ານ ພັນໂນລາ ສຸຄະບັນດິດ (ທ່ານ ພັນໂນລາ), ເຊິ່ງໃນປັດຈຸບັນ ບໍລິສັດໄດ້ມີສາຂາໃຫ້ບໍລິການລູກຄ້າທັງໝົດ 4 ສາຂາ ສະເພາະພາຍໃນນະຄອນຫຼວງວຽງຈັນ ໄດ້ແກ່: ສາຂາໂພນຕ້ອງ (ສຳນັກງານໃຫຍ່), ສາຂາທົ່ງຂັນຄຳ, ສາຂາສີໄຄ ແລະ ສາຂາທົ່ງຕູມ.

ປີ	ເຫດການສຳຄັນ
1988	➢ ຮ້ານ ສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ໂດຍເລີ່ມມາຈາກ ທ່ານ ນາງ ສຸວັນນີ ໄດ້ເບິ່ງເຫັນເຖິງໂອກາດການຂະຫຍາຍຕົວຂອງ ສປປ ລາວ ໃນອະນາຄົດ ປະກອບກັບ ທ່ານ ວັດດານາ ໄດ້ສຳເລັດການສຶກສາດ້ານສະຖາປັດຕະຍະກຳ ແລະ ມີປະສົບການກ່ຽວກັບການກໍ່ສ້າງ, ພ້ອມຍັງເປັນຊ່ວງທີ່ ສປປ ລາວ ກຳລັງເລີ່ມມີການເຕີບໃຫຍ່ຂະຫຍາຍຕົວດ້ານການກໍ່ສ້າງພື້ນຖານໂຄງລ່າງ ພາຍໃຕ້ວິໄສທັດອັນກວ້າງໄກຂອງ

ปี	เหตการณ์สำคัญ
	ลัดถะบาน. สะนั้ น, จึ่งได้เริ่มต้นดำเนินทุละกิดจัดจำหน่ายอัดสะดุก่ำส้างที่อ ไป ในร้านค้าขะหนาดหนึ่งห้องแถอ (พื้นที่ปะมาน 50 ตาแม้ด) ที่ บ้าน สีสะ หอาด, เมืองๆ จันทะบูลิ, นะคอนหลวงวงๆจัน ปัดจุบันเป็นสาขาย่อย (สาขา ที่งขันคำ) ด้อยทึนจ็ดทะบุน 3,250,000 กีบ.
1993	➢ เป็นช่วงที่พากการนก่ำส้างใน สปป ลาอ มีการจะเลินเติบโตย่างต่เนื่องๆ, ถอามต้องการสินค้าปะเพดอัดสะดุก่ำส้างเพิ่มขึ้น การแข่งขันทางด้านทุละ กิดอัดสะดุก่ำส้างจึ่งเพิ่มขึ้น อันเป็นสาเหตเร็ดให้ต้นทึนสินค้าที่นำเข้ามาจัด จำหน่ายบ่สามาดแข่งขันกับคู่แข่งได้. เพื่อให้ทุละกิดสามาดนำสินค้ามาจาก โธงงานผู้ผะลิดได้โดยกึงในต้นทึนที่ถืกลึง, ปะกอบกับทางๆ พัก และ ลัดถะบาน มินะโยบายสะหนับสะหนุนให้ซื้กิกาขายปาย ซึ่ การนหุดผ่อนการซื้ สินค้าผ่านพ่ค้าถินกางตามชายแดน เพื่อให้ผู้บริโพกใน สปป ลาอ ได้ชิมใช้ สินค้าในลาถาถืกลึง อันนำไปสู่การยึกละดับถอามสามาดในการแข่งขันให้ สูงขึ้น. พ้อมทึ่ง ผู้บริหานบริสัด ต้องการให้บริสัดมีโถงส้างการจัดการที่ เป็นละบับ และ มีแบบแผนหลายขึ้น. สะนั้น, บริสัด จึ่งได้มีการจ็ดทะบุน เป็น บริสัด สุวันนิ การค้า ขาออก-ขาเข้ำ จำกัดผู้ดุอ ด้อยทึนจ็ดทะบุน 100,000,000 กีบ.
1995	➢ บริสัด ได้มีการ หันป่งนสินค้าหักจากสินค้าปะเพดอัดสะดุก่ำส้างโถงส้างหัก เช่น: เหั็ก และ ซิมัง มาเป็นสินค้าปะเพดอัดสะดุติกแต่ง เช่น: กะโล, สุขะ พัน, ก่อกน้ำ และ สินค้าอื่นๆ. เนื่องจากว่าสินค้าโถงส้างมีโอกาดจะเลิน เติบโตหน้อย, มีการแข่งขันหลายกว่า และ สินค้าดั่งก่าอบ่สามาดส้างจุดเด่น ในการขายให้แก่บริสัดได้. แต่ในเบื้องต้นการจำหน่ายสินค้าปะเพดอัดสะดุ ติกแต่งบ่ได้รับผินตอบแทนที่ดี เพาะว่าเป็นสินค้าที่มีการจัดการยาก, มีการ ป่งนแปงรูบแบบใหม่ให้ทันสะไหมตะหลอดเอลา. แต่ด้อยอิไสทัดอันกว้างไก ของผู้บริหาน และ ถอามมักรักในทุละกิดปะเพดนี้, ผู้บริหานของบริสัด จึ่งบ่ยอมแพ้ต่ออุปะสักต่างๆ และ ขอกหาทุกวิหิทางเพื่อที่จะสามาดดำเนิน ทุละกิดไปได้ด้อยดี โดยการขอกหาจุดเด่นของสินค้าให้มีถอามหลากหลาย และ ทันสะไหมขึ้นเพื่อตอบสะหนองกับถอามต้องการของลูกค้า.
2000	➢ นับแต่ปีนั้นเป็นต้นมา, ทุละกิดของบริสัดได้รับการตอบสะหนองที่ดีขึ้นมา โดยตะหลอด และ ได้มีการจะเลินเติบโตย่างต่เนื่องๆ ถอามต้องการสินค้า ทางด้านอัดสะดุก่ำส้างเพิ่มขึ้นตามการจะเลินเติบโตของ สปป ลาอ, ปะกอบ กับ ท่าน กิดสะดา สุดะบันดิด (ท่าน กิดสะดา) ได้สำเล็ดการสึกสาจาก ต่างปะเทด และ กำได้เข้ามามีบิดบาดในการบริหานทุละกิดให้มีถอาม

ปี	เหตการณ์สำคัญ
	ເຂັ້ມແຂງຂຶ້ນ. ສະນັ້ນ, ບໍລິສັດໄດ້ເປີດສາຂາໂພນຕ້ອງຂຶ້ນ ເພື່ອຈັດຈຳໜ່າຍ ວັດສະດຸກໍ່ສ້າງ, ຕົກແຕ່ງ, ສ້ອມແປງບ້ານ ແບບຄົບວົງຈອນ ໂດຍຈັດວາງໃນສູນສະແດງສິນຄ້າທີ່ທັນສະໄໝເປັນຮ້ານທຳອິດຂອງ ສປປ ລາວ ດ້ວຍຂະ ໜາດ 1,500 ຕາແມັດ, ມີເນື້ອທີ່ສາງ 2,000 ຕາແມັດ, ເນື້ອທີ່ຈອດລົດ 20 ຄັນ ແລະ ມີການຍ້າຍສຳນັກງານໃຫຍ່ຈາກ ສາຂາທົ່ງຂັນຄຳ ມາເປັນ ສາຂາໂພນຕ້ອງ (ສຳນັກງານໃຫຍ່ໃນປັດຈຸບັນ) ໂດຍ ຮ້ານຄ້າສຸວັນນີ ສາຂາທົ່ງຂັນຄຳ ໄດ້ມີການດັດແປງເປັນສູນຈຳໜ່າຍສີ ແລະ ອຸປະກອນຄົບວົງຈອນແທນມາຈົນເຖິງປັດຈຸບັນ.
2004	➢ ສປປ ລາວ ໄດ້ເປີດກວ້າງຫຼາຍຂຶ້ນໃນພາກການລົງທຶນ ແລະ ເພື່ອຮອງຮັບການເປັນເຈົ້າພາບການແຂ່ງຂັນກິລາຊີເກມ ຄັ້ງທີ 25 ເຊິ່ງຈະຈັດຂຶ້ນໃນປີ 2009, ບໍລິສັດ ໄດ້ມີການເປີດສາຂາເພີ່ມຂຶ້ນ ທີ່ບ້ານ ນາແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ (ສາຂາສີໄຄ) ເຊິ່ງເປັນສູນຈັດຈຳໜ່າຍສິນຄ້າ ແລະ ບໍລິການ ທາງດ້ານວັດສະດຸກໍ່ສ້າງ, ຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ທີ່ໃຫຍ່ທີ່ສຸດໃນ ສປປ ລາວ ໂດຍມີຂະໜາດພື້ນທີ່ວາງສະແດງສິນຄ້າປະມານ 2,000 ຕາແມັດ, ພື້ນທີ່ສາງ ປະມານ 5,000 ຕາແມັດ ແລະ ພື້ນທີ່ຈອດລົດ 60 ຄັນ.
2011	➢ ໃນການຕອບຮັບຮູບແບບການໃຊ້ຊີວິດທີ່ທັນສະໄໝ ແລະ ອຳນວຍຄວາມສະດວກໃນການເລືອກຊື້ສິນຄ້າ ເພື່ອຮອງຮັບກັບຈຳນວນສິນຄ້າທີ່ຫຼາກຫຼາຍຂຶ້ນກວ່າ 30,000 ລາຍການ, ບໍລິສັດໄດ້ມີການປັບປຸງ ແລະ ສ້ອມແປງສາຂາໂພນຕ້ອງ ເຊິ່ງໄດ້ເພີ່ມເນື້ອທີ່ວາງສະແດງສິນຄ້າຈາກ 1,500 ຕາແມັດ ມາເປັນ 4,320 ຕາແມັດ, ເນື້ອທີ່ສາງຈາກ 2,000 ຕາແມັດ ມາເປັນ 3,053 ຕາແມັດ ແລະ ເນື້ອທີ່ຈອດລົດຈາກ 20 ຄັນ ມາເປັນ 40 ຄັນ. ແລະ ສຳເລັດໃນປີ 2013
2012	➢ ເປັນຊ່ວງປີທີ່ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມສຸດຍອດຜູ້ນຳອາຊີ-ເອີຣົບ (Asia-Europe Meeting) ຄັ້ງທີ 9 ແລະ ເປັນຊ່ວງທີ່ລັດຖະບານ ສປປ ລາວ ໄດ້ອະນຸມັດການລົງທຶນຕ່າງໆ ຫຼາຍໂຄງການ ເຊັ່ນ: ໂຄງການສ້າງອາຄານສຳນັກງານ, ສ້າງສູນການຄ້າຕ່າງໆ ອັນເປັນປັດໄຈສຳຄັນທີ່ເຮັດໃຫ້ຜູ້ບໍລິຫານຂອງບໍລິສັດ ເຫັນຊ່ອງທາງທີ່ດີ ໃນການຂະຫຍາຍທຸລະກິດໂດຍຕົກລົງເຊັນສັນຍາການຄ້າຮ່ວມກັບບໍລິສັດ ມິຊູບິຊິ (Mitsubishi) ປະເທດຍີ່ປຸ່ນ ໃນການເປັນຕົວແທນຈຳໜ່າຍ ແລະ ໃຫ້ບໍລິການສ້ອມແປງລິບ ແລະ ຂັ້ນໄດເລື່ອນ ພາຍໃຕ້ການສິນຄ້າ Mitsubishi ພຽງແຫ່ງດຽວໃນ ສປປ ລາວ. ບໍລິສັດມີການເປີດສາຂາເພີ່ມຂຶ້ນ ທີ່ບ້ານ ທົ່ງຕູມ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ (ສາຂາທົ່ງຕູມ)
2013	➢ ໄດ້ເລີ່ມມີການປັບປຸງ ແລະ ສ້ອມແປງສາຂາສີໄຄຕື່ມອີກ ໂດຍເພີ່ມພື້ນທີ່ວາງສະແດງສິນຄ້າຈາກ 2,000 ຕາແມັດ ມາເປັນ 6,520 ຕາແມັດ, ເນື້ອທີ່ສາງຈາກ 5,000 ຕາ

ปี	เหตุการณ์สำคัญ
	แม็ด มาเป็น 12,230 ตารางแม็ด และ เนื้อที่จอดลดจาก 60 คัน มาเป็น 130 คัน. เสร็จสำเร็จในปี 2014 ➢ ในการกรุงพร้อมเพื่อก้าวเข้าสู่ประชาคมเศรษฐกิจอาเซียน (AEC), เร็ดให้บันดานักลงทุนจากต่างประเทศเล็งหันมาลงทุนใน สปป ลาว ขยายขึ้น เชื่อเป็นสาเหตุเร็ดให้มีความต้องการบันดาตึกอาคาร และ สำนักงานห้องการเพิ่มขึ้น. สะนั้น, เพื่อตอบสะหนองความต้องการของลูกค้ากุ่มดั่งก่าว บริษัท ได้มีการเซ็นสัญญาการค้าร่วม กับ บริษัท โมเดิ่นฟอมกรุบ จำกัด (มะหาชน) (Modernform) ในการเป็นตัวแทนจำหน่าย เฟินิเจ้สำเร็จรูบ การสินค้า Modernform ในขอบเขตนะครอบคลุมวงเวียงจัน เชื่อได้จำหน่ายที่สาขาทั่งตูม.
2015	➢ ในปี 2015, บริษัท ได้มีการบับปุงวิสาหะกิดเพื่อให้สอดคล่องกับการปุ่งแปงใหม่, สะพาบความต้องการ ซึ่ ความจำเป็นทางทุละกิด และ บิดบันยัดของกิดหมายว่าด้วยวิสาหะกิด เชื่อ บริษัท ได้ปุ่งรูบแบบวิสาหะกิดจาก บริษัท สุวันนิการค้า ขาออก-ขาเข้า จำกัดผู้ดงอ มาเป็น บริษัท สุวันนิ การค้า ขาออก-ขาเข้า จำกัด, ด้วยทุนจดทะบุน 500,000,000 กีบ. ➢ อิงตามกองประชุมวิสามันผู้ถือหุ้น ครั้งที่ 1/2015 วันที่ 28 กรกะกิด 2015 ที่ได้มีวาละพิจาละนาปับปุงมูนค่าที่กำนิดหุ้นของบริษัท จากเดิม 50,000 กีบต่อหุ้น เป็น 2,000 กีบต่อหุ้น, พิจาละนาเลื่องการเพิ่มทุนของบริษัท จากเดิม 500,000,000 กีบ เป็น 280.00 ตื้กีบ โดยมีจำนวนหุ้นทั่งหมด 140,000,000 หุ้น, ➢ บริษัท ได้มีการร่วมลงทุนกับ บริษัท โกอบ้อนเธ้า อินเตเนชันแนอ จำกัด เชื่อเป็นบริษัดร่วมทุนละหว่าง บริษัท สะหยามโกอบ้อนเธ้า จำกัด (มะหาชน) และ บริษัท ปูนซิเม้นไท จำกัด เชื่อเป็นผู้ประกอบการจัดจำหน่ายวัดสะดุก่อสร้าง และ ติกแต่งอาคารแบบคบวงจรในประเทดไท โดยการร่วมลงทุนดั่งก่าอยังเป็นการถ่ายทอดความรู้ในการดำเนินทุละกิด (Know-how) และ เสิมสร้างสักกะยะพาบในการแข่งขันทางทุละกิดของบริษัทในไลยะยาว. ➢ ในวันที่ 13 กันยา 2015 บริษัดได้มีการประชุมวิสามันผู้ถือหุ้นครั้งที่ 3/2015 โดยมีวาละที่สำคัน คือ: การแปสะพาบเป็นบริษัดมะหาชน และ ได้ปุ่งชื่อเป็น "บริษัด สุวันนิ โธมเซ้นเต มะหาชน" พร้อมกับได้เพิ่มทุนจดทะบุนเพื่อรองรับการออกจำหน่ายหุ้นสามันเพิ่มทุนให้แก่มวนชนครั้งท่าอิด (IPO) จำนวน 50.00 ตื้กีบ โดยออกหุ้นสามันเพิ่มทุนจำนวน 25,000,000 หุ้น, มูน

ปี	เหตุการณ์สำคัญ
	ຄ່າກຳນົດ (Par Value) 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການຂະຫຍາຍຕົວຂອງທຸລະກິດ ແລະ ການກຽມຕົວຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນການເປັນບໍລິສັດຊັ້ນນຳທາງດ້ານຈັດຈຳໜ່າຍສິນຄ້າ ແລະ ບໍລິການ ດ້ານວັດສະດຸກໍ່ສ້າງ ຕົກແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ໃນ ສປປ ລາວ. ➢ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ນຳຮຸ້ນເຂົ້າແລກປ່ຽນ-ຊື້ຂາຍ ໃນຕະຫຼາດຫຼັກຊັບລາວຄັ້ງທຳອິດ (First Trading Day) ໃນວັນທີ 11 ທັນວາ 2015
2016	➢ ວັນທີ 22/04/2016 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈັດກອງປະຊຸມສາມັນ ຜູ້ຖືຮຸ້ນ ຄັ້ງທຳອິດຂຶ້ນ ທີ່ຕະຫຼາດຫຼັກຊັບລາວ ຊັ້ນ 8 ເວລາ 14:00 -15:45 ມີຜູ້ເຂົ້າຮ່ວມທັງໝົດ 118 ຄົນ ມາດ້ວຍຕົນເອງ 30 ທ່ານ ແລະ 88 ທ່ານ ຮັບມອບສິດ ລວມເປັນຈຳນວນຮຸ້ນ 157,729,900 ຮຸ້ນ ➢ ວັນທີ 12/08/2016 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈັດກອງປະຊຸມສະພາບໍລິຫານ ຄັ້ງທີ່ 2 ຂຶ້ນ ທີ່ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຊັ້ນ 4 ເວລາ 16:00 -17:45 ໂດຍມີຜູ້ເຂົ້າຮ່ວມທັງໝົດ 8 ທ່ານ

ວຽກງານດ້ານການຕະຫຼາດ

ໃນໄຕມາດສາມ ປີ 2016 ທີ່ຜ່ານມາ ບໍລິສັດໄດ້ມີການສຸມໃຊ່ວຽກງານດ້ານການຕະຫຼາດໂດຍໄດ້ມີການຈັດຕັ້ງໜ່ວຍງານວິໄຈການຕະຫຼາດຂຶ້ນໃນວັນທີ 24 ກໍລະກົດ 2015 ເຊິ່ງມີພາລະບົດບາດໃນການເປັນຫົວໜ່ວຍສະໜັບສະໜູນ ຂະບວນການຂາຍ ແລະ ການຈັດຊື້ ສິນຄ້າເຂົ້າມາຂາຍໃນຮ້ານ ເພື່ອໃຫ້ບໍລິສັດໄດ້ມີການນຳຍຸກນຳສະ ໄໝສິນຄ້າໃນການຕອບສະໜອງຄວາມຕ້ອງການຂອງລູກຄ້າ.

ໜ່ວຍງານ ວິໄຈການຕະຫຼາດ ປະກອບ ມີ 14 ທ່ານ ຍິງ 7 ຄົນ ແລະ ຊາຍ 7 ຄົນ ແລະ ແບ່ງອອກເປັນສາມໜ່ວຍງານໃຫຍ່ຄື:

a) ໜ່ວຍງານ ວິເຄາະສິນຄ້າໃໝ່: ເຮັດໜ້າທີ່ສຳຫຼວດຊອກຫາສິນຄ້າໃໝ່ເຂົ້າມາຈັດຈຳໜ່າຍ ຕາມຂັ້ນຕອນໃນການພິຈາລະນາສິນຄ້າໃໝ່ ຄື: ສຶກສາລາຍລະອຽດສິນຄ້າ, ສຶກສາລາຄາ ແລະ ສຶກສາຄວາມຕ້ອງການ ແລະ ຄວາມສາມາດຊື້

b) ໜ່ວຍງານ ທົບທວນສິນຄ້າເກົ່າ: ມີການກວດນັບ ແລະ ຈັດການສິນຄ້າເກົ່າທີ່ລ່າສະໄໝມາ ຈັດກິດຈະກຳສົ່ງເສີມການຂາຍ ເພື່ອບໍ່ໃຫ້ມີສິນຄ້າຄ້າງສາງເປັນຈຳນວນຫຼາຍ

c) ໜ່ວຍງານ ສະຖິຕິ: ເຮັດໜ້າທີ່ເກັບກຳຂໍ້ມູນຕ່າງໆໃນບໍລິສັດ ເຊັ່ນ: ຂໍ້ມູນຂອງຜູ້ສະໜອງ, ສິນຄ້າ ແລະ ລາຄາສິນຄ້າ.

ພ້ອມກັນນັ້ນ, ບໍລິສັດ ຍັງໄດ້ເພີ່ມຍຸດທະສາດຕ່າງໆເຂົ້າໃນການຕະຫຼາດດັ່ງລຸ່ມນີ້:

- **ຍຸດທະສາດດ້ານຜະລິດຕະພັນ (Product)**:

ບໍລິສັດຕອບສະໜອງສິນຄ້າແກ່ຜູ້ບໍລິໂພກດ້ວຍສິນຄ້າທີ່ມີຄຸນະພາບ ແລະ ຄວາມຫຼາກຫຼາຍໃຫ້ແກ່ຜູ້ບໍລິໂພກ ໂດຍບໍລິສັດຈະຄັດເລືອກສິນຄ້າຈາກຜູ້ຜະລິດທີ່ເປັນທີ່ຍອມຮັບລະດັບສາກົນ ໂດຍມີສິນຄ້າຫຼາຍກວ່າ 400 ຍີ່ຫໍ້ ປະກອບໄປດ້ວຍສິນຄ້າທີ່ຫຼາກຫຼາຍກວ່າ 30,000 ລາຍການ ແລະ ຍັງໄດ້ມີການເພີ່ມຈຳນວນສິນຄ້າໃໝ່ເຂົ້າມາ ອີກຈຳນວນ 23 ຍີ່ຫໍ້ ປະກອບດ້ວຍ 300 ກວ່າລາຍການ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າ ດັ່ງລຸ່ມນີ້:

ລ/ດ	ຍີ່ຫໍ້ ສິນຄ້າ	ປະເພດສິນຄ້າ
1	LONGWELL	ຕູ້ເຊື່ອມ, ເຄື່ອງເຊື່ອມ
2	HAUS	ຕູ້ອາບ ແລະ ຊຸດເຄົາເຕີອ່າງລ້າງໜ້າ
3	IYA	ສິລິໂຄນ
4	BOJ	ນ໊ອດຈັບ
5	CROCODILE	ຢາແນວຊີມັງກາວ
6	GREEN U PVC	ບານປະຕູຫ້ອງນ້ຳ

ລ/ດ	ຍີ່ຫໍ້ ສິນຄ້າ	ປະເພດສິນຄ້າ
7	KNK	ລໍ້ຍູ້ປູນ
8	EVE	ເຕົ່າແກ໊ດ ແລະ ເຕົ່າດູດຄວນ
9	GATA	ຫຼອດໄຟ
10	THE THREE	ແຜ່ນສະທ້ອນແສງ
11	GOLDEN HOME	ກ໋ອກນ້ຳ
12	SEKURE	ລູກບິດ+ບານພັບ
13	YIP & JACK	ເຄື່ອງມືຊ່າງ
14	HI-TOP	ເຄື່ອງມືຊ່າງ
15	HYGIENIC	ເຄື່ອງເປົ່າມື
16	MAZUMA	ເຄື່ອງທຳນ້ຳຮ້ອນ
17	VANNACHAI	ປະຕູ + ໄມ້ປູພື້ນ
18	BCG	ປະເພດປູນ
19	TECNOGAS	ປະເພດເຄື່ອງຄົວ
20	BOSCH	ອຸປະກອນເຄື່ອງມືຊ່າງ
21	SIAMPLAN	ນ໊ອດ ແລະ ອຸປະກອນໄຟນິເຈີ
22	NIPPON PAINT	ປະເພດສີປະສົມ
23	STARMARK	ເຄື່ອງຄົວ

- **ຍຸດທະສາດດ້ານຊ່ອງທາງການຈັດຈຳໜ່າຍ (Place)**

ບໍລິສັດ ເອົາໃຈໃສ່ຈັດຕັ້ງຊ່ອງທາງການຈັດຈຳໜ່າຍ ຫຼື ສາຂາ ໃນສະຖານທີ່ຊຸມຊົນໂດຍໃນປັດຈຸບັນຕັ້ງຢູ່ໃນນະຄອນຫຼວງວຽງຈັນທັງໝົດ ເຊິ່ງສະດວກຕໍ່ການເດີນທາງ. ໃນອະນາຄົດບໍລິສັດມີເປົ້າໝາຍໃນການຂະຫຍາຍສາຂາເຊິ່ງກໍ່ເປັນໜຶ່ງໃນຊ່ອງທາງການຈັດຈຳໜ່າຍຂອງບໍລິສັດ ຄອບຄຸມຕາມຕົວເມືອງໃຫຍ່ເພື່ອຕອບສະໜອງຄວາມຕ້ອງການຜູ້ບໍລິໂພກໃນຫຼາກຫຼາຍພື້ນທີ່ ພ້ອມທັງຍັງເປັນການຮອງຮັບການເຕີບໂຕຂອງພາກການກໍ່ສ້າງໃນອະນາຄົດ. ບໍລິສັດຍັງໄດ້ເພີ່ມຫຼາກຫຼາຍຊ່ອງທາງການຈັດຈຳໜ່າຍສິນຄ້າເພື່ອໃຫ້ຜູ້ບໍລິໂພກໄດ້ຮັບຮູ້ຂ່າວສານຕ່າງໆຂອງບໍລິສັດ ເຊັ່ນວ່າ: ຂໍ້ມູນກ່ຽວກັບສິນຄ້າ,

ການຫຼຸດລາຄາສິນຄ້າ ແລະ ການຊິງໂຊກເພື່ອຮັບຂອງລາງວັນເປັນຕົ້ນ. ເຊິ່ງບໍລິສັດໄດ້ແບ່ງປະເພດຂອງຊ່ອງທາງໃນການໂຄສະນາອອກເປັນ 3 ປະເພດໃຫຍ່ດັ່ງນີ້:

- ຜ່ານສື່ສິ່ງພິມຕ່າງໆເຊັ່ນ: ໜັງສືພິມ, ວາລະສານ, ໂບຊົວ, ໃບປິວ ແລະ ແຜ່ນພັບ

- ຜ່ານປ້າຍໂຄສະນາເຊັ່ນ: ປ້າຍຄົງທີ່, ປ້າຍເຄື່ອນທີ່ ແລະ ປ້າຍໄຟ
- ຜ່ານສື່ອີເລັກໂທນິກເຊັ່ນ: Internet, ວິທະຍຸ, ໂທລະພາບ, ແອບຕ່າງໆ

ນອກຈາກນີ້ແລ້ວ, ບໍລິສັດຍັງໄດ້ມີການອອກບູດຕ່າງໆ ໃນການເຜີຍແຜ່ຂໍ້ມູນຂອງບໍລິສັດ ເຊັ່ນ: ງານສະຖາປະນິກ ແລະ ວິສະວະກອນກໍ່ສ້າງ ທີ່ໄອເຕັກ, ງານວາງສະແດງສິນຄ້າ YEAL EXPO 2015 ທີ່ ຫໍປະຊຸມ ແຫ່ງ ຊາດຫຼັກ 5, ງານສົ່ງເສີມຄວາມຮູ້ທີ່ ຕະຫຼາດຫຼັກຊັບລາວ ແລະ ງານ ວາງສະແດງສິນຄ້າຂອງ ກະຊວງ ອຸດສາຫະກຳການຄ້າ ທີ່ໄອເຕັກ. ພ້ອມກັນນັ້ນ, ບໍລິສັດຍັງໄດ້ມີ ໂຄງການຊ່ວຍເຫຼືອສັງຄົມຢ່າງຫຼວງຫຼາຍ ເຊັ່ນ: ການບໍລິຈາກເລືອດ, ຊຸກຍູ້ນັກກິລາຢູ່ໂດໄປແຂ່ງຂັນ ຕ່າງປະເທດ, ສະໜັບສະໜູນກູ້ໄພນະຄອນຫຼວງ, ຊ່ວຍປຸກສ້າງໂຮງຮຽນໃຫ້ແກ່ເດັກນ້ອຍໃນເຂດຫ່າງໄກ ສອກຫຼີກ, ລວບລວມເລື່ອງການບໍລິຈາກຊ່ວຍເຫຼືອໄພນ້ຳຖ້ວມທີ່ແຂວງຫຼວງພະບາງ, ຊ່ວຍເຫຼືອສູນຄວບ ຄຸມ ແລະ ປ້ອງກັນພະຍາດຜິວໜັງ ແລະ ໂຄງການອື່ນໆອີກ ໂດຍລວມເງິນໃນການຊ່ວຍເຫຼືອສັງຄົມໃນ ປີ 2016 ທັງໝົດເທົ່າກັບ 55,812,000 ກີບ.

- **ຍຸດທະສາດການສົ່ງເສີມການຕະຫຼາດ (Promotion)**

ບໍລິສັດມີນະໂຍບາຍສົ່ງເສີມການຕະຫຼາດທີ່ຫຼາກຫຼາຍ ແລະ ແຕກຕ່າງຕາມຄວາມເໝາະສົມຂອງ ກຸ່ມປະເພດສິນຄ້າ ໂດຍຈະເນັ້ນການສົ່ງເສີມການຕະຫຼາດສຳລັບສິນຄ້າຊະນິດໃໝ່ ແລະ ສິນຄ້າທີ່ ໝຸນວຽນຊ້າ ລວມເຖິງສິນຄ້າທີ່ເຂົ້າຮ່ວມກິດຈະກຳທາງການຕະຫຼາດຈາກຜູ້ຜະລິດ ດັ່ງລຸ່ມນີ້:

- ໄດ້ມີການຈັດງານຫຼຸດລາຄາສິນຄ້າຕາມເທດສະການຕ່າງໆເຊັ່ນ: ງານປີໃໝ່ລາວ, ປີໃ ໝ່ສາກົນ ແລະ ງານອື່ນໆ.
- ໄດ້ມີການຫຼຸດແລກແຈກແຖມເມື່ອຊື້ສິນຄ້າຕາມຍີ່ຫໍ້ທີ່ໄດ້ລະບຸໄວ້ ເຊັ່ນ: ຍີ່ຫໍ້ COTTO, BEGER, HAFELE, WOODTECT, GATA, KOHLER ແລະ ອື່ນໆອີກ.
- ໄດ້ມີການຈັບສະຫຼາກຊິງໂຊກເພື່ອຮັບຂອງລາງວັນ ເຊັ່ນ: ລາງວັນໂທລະພາບສີຈໍ LCD Samsung 32" ຈຳນວນ 100 ລາງວັນ ແລະ ແຈກສາຍຄໍຄຳມູນຄ່າ 2 ບາດ.

ວຽກງານດ້ານບຸກຄະລາກອນ


ການດຳເນີນວຽກງານດ້ານບຸກຄະລາກອນໃນຕົ້ນປີ 2015 ແມ່ນໄດ້ເນັ້ນໃນການເປັນຄູ່ຮ່ວມທາງຍຸດທະສາດຂອງອົງກອນ ໂດຍການປັບປຸງໂຄງຮ່າງການຈັດຕັ້ງຂອງອົງກອນ ຈາກໂຄງສ້າງທີ່ເປັນບໍລິສັດ ຈຳກັດ ມາເປັນບໍລິສັດມະຫາຊົນ ເພື່ອໃຫ້ສອດຄ່ອງຕາມໂຄງສ້າງ ແລະ ເງື່ອນໄຂຂອງຕະຫຼາດຫຼັກຊັບລາວ.

ໃນເບື້ອງສະຫວັດດີການ, ການດູແລຊີວິດການເປັນຢູ່ຂອງພະນັກງານພາຍໃນອົງກອນໃຫ້ມີສະພາບການເປັນຢູ່ທີ່ດີຂຶ້ນ, ມີຄວາມປອດໄພ ແລະ ເພື່ອເປັນການສົ່ງເສີມໃຫ້ພະນັກງານມີຄວາມດຸໝັ່ນ, ຫ້າວຫັນ, ກະຕືລືລົ້ນໃນການປະຕິບັດວຽກງານ, ໃນປີ 2015 ທາງບໍລິສັດໄດ້ມີການມອບລົດ TOYOTA AVANZA ໃຫ້ແກ່ພະນັກ ງານໃນລະດັບຜູ້ຈັດການສາຂາຂຶ້ນໄປຈຳນວນ 3 ຄັນ, ມອບລາງວັນພະນັກງານດີເດັ່ນ ຈຳນວນ 121 ທ່ານ.

- **ພາບລວມ ແລະ ຜົນງານຂອງໄຕມາດ 3 ປີ 2016**

- ຈຳນວນພະນັກງານທັງໝົດຮອດວັນທີ 30 ກັນຍາ 2016 ມີຈຳນວນ 615 ຄົນ,
- ຮັບພະນັກງານເຂົ້າໃໝ່ທັງໝົດຈຳນວນ 68 ຄົນ, ຮັບເຂົ້າມາທົດແທນຄົນຕຳແໜ່ງວ່າງ 15 ຄົນ.
- ອັດຕາການລາອອກຂອງພະນັກງານສົມບູນທັງໝົດ 15 ຄົນ ກວມເອົາ 4%.
- ຖືກປົດອອກ 00 ຄົນ
- ຖືກເລື່ອນຕຳແໜ່ງຈຳນວນ 00 ຄົນ, (ປີ 2015 ຈຳນວນ 19 ຄົນ)

ອັດຕາການສະເລ່ຍອາຍຸຂອງພະນັກງານພາຍໃນອົງກອນ



ເງິນເດືອນ ແລະ ສະຫວັດດີການ

- ອັດຕາການເພີ່ມຂຶ້ນຂອງເງິນເດືອນໃນປີ 2015 ແມ່ນເພີ່ມຂຶ້ນ 10%
- ເງິນປັນຜົນໃຫ້ພະນັກງານ (commission) ຈຳນວນ 6 ງວດຕໍ່ປີ
- ຄ່າປະກັນສຸຂະພາບ(ປະກັນສັງຄົມ) ປີ 2015 ບໍລິສັດຈ່າຍໃຫ້ທັງໝົດ 234,765,600 ກີບ
- ຄ່າທຳນຽມກວດສຸຂະພາບປະຈຳປີ 62,275,000 ກີບ
- ຊຸກຍູ້ພະນັກງານເກີດລູກໃໝ່ 7,505,000 ກີບ
- ຊ່ວຍກິນທານນຳພະນັກງານ ແລະ ຍາດສາຍຕັ້ງເສຍຊີວິດ 14,400,000 ກີບ

- **ກິດຈະກຳສ້າງຄວາມສາມັກຄີໃນໝູ່ພະນັກງານ**
- ໄດ້ມີການຈັດກິດຈະກຳພາພະນັກງານໄປທ່ອງທ່ຽວ 6 ຄັ້ງ/ປີ
- ໄດ້ມີການຈັດງານກິລາເພື່ອເສີມສ້າງຄວາມສາມັກຄີຂອງພະນັກງານໃນອົງກອນ

- **ນະໂຍບາຍພິເສດສຳລັບພະນັກງານ**
- ບໍລິສັດໄດ້ມີເບ້ຍຂະຫຍັນປະຈຳເດືອນໃຫ້ພະນັກງານຜູ້ທີ່ມີຄວາມດຸໝັ່ນ, ຫ້າວຫັນໃນການປະຕິບັດ ວຽກງານ ບໍ່ມາເຮັດວຽກຊັກຊ້າ, ບໍ່ຂາດວຽກ,ບໍ່ລາປ່ວຍ ແລະ ບໍ່ລາພັກປະຈຳປີ.

ວຽກງານດ້ານຍຸດທະສາດອົງກອນ

ຍຸດທະສາດອັນສຳຄັນຂອງບໍລິສັດ ແມ່ນກົງກັບຄຳຂວັນຂອງ ບໍລິສັດທີ່ວ່າ ຍົກລະດັບສິນຄ້າ ແລະ ບໍລິການ ສົ່ງມອບຖືກຕ້ອງ ຄົບຖ້ວນ ທັນເວລາ ສ້າງຄວາມເພິ່ງພໍໃຈໃຫ້ລູກຄ້າ ພັດທະນາຢ່າງຕໍ່ເນື່ອງ ເຊິ່ງໄດ້ມີລະບົບການບໍລິຫານງານທີ່ມີຄຸນະພາບ ແລະ ໄດ້ຮັບມາດຕະຖານສາກົນ ISO9001-2008 ແລະ ຍັງຈະສືບເນື່ອງພັດທະນາລະບົບການບໍລິຫານງານໃຫ້ໄດ້ມາດຕະຖານ ISO 2015 ເຂົ້າໃນການບໍລິຫານງານຂອງທຸກສາຂາ.

ການມອບພັນທະອາກອນ

ຫລັງຈາກບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈົດທະບຽນໃນຕະຫລາດຫລັກຊັບລາວ ຊ່ວງທ້າຍປີ 2015 ບໍລິສັດກໍ່ໄດ້ປະຕິບັດຢູ່ພາຍໃຕ້ກົດໝາຍຂອງ ສປປລາວ ໂດຍສະເພາະກົດໝາຍສ່ວຍສາອາກອນຢ່າງເຂັ້ມງວດເຫັນໄດ້ຈາກການປະຕິບັດພັນທະມອບອາກອນໃຫ້ລັດເຊັ່ນ: ອາກອນມູນຄ່າເພີ້ມ 10% ອາກອນເງິນເດືອນ ອາກອນກຳໄລ ເປັນຕົ້ນ.

ການມອບພັນທະອາກອນໃຫ້ລັດປະຈຳໄຕມາດ 3 ປີ 2016

ລ/ດ	ລາຍການ	ຫົວໜ່ວຍ	ລວມມູນຄ່າ (ກີບ)
1	ອາກອນມູນຄ່າເພີ້ມ		23,732,014,433
2	ອາກອນເງິນເດືອນ		615,294,719
3	ອາກອນກຳໄລ		1,742,965,245
			26,090,274,397

ສົນທານດຳເນີນທຸລະກິດໄຕມາດ 3 ປີ 2016

ເອກະສານລາຍງານການເງິນ

30 ກັນຍາ 2016



ສຸວັນນີ
SOUVANNY
Home center

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONGTONGSAVAT RD., BAN PHONGTONGSAVAT, CHANTHABULY DISTRICT, VTE., LAO PDR
OFFICE TEL: (85621) 415645, FAX / TEL: (85621) 262 984, WEBSITE:SOUVANNY.COM

	ບິດ ອະທິບາຍ	ທີ່ບທວນຄືນ 30 ກັນຍາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ		42,036,545,443	96.575.616.427
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ		53,910,493,787	28.794.539.438
ເຄື່ອງໃນສາງ , ສຸດທິ		96,858,397,449	73.244.828.356
ຊັບສິນໝຸນວຽນອື່ນໆ		6,914,142,391	3.070.175.100
ລວມຊັບສິນໝຸນວຽນ		199,719,579,070	201.685.159.321
ຊັບສິນບໍ່ໝຸນວຽນ			
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ		333,419,180,734	320.523.942.056
ລວມຊັບສິນບໍ່ໝຸນວຽນ		333,419,180,734	320.523.942.056
ລວມຊັບສິນ		533,138,759,804	522.209.101.377

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົມ
SOUVANNY HOME CENTER PUBLIC COMPANY

ວັດທນາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

ພັນໂນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

	ບົດ ອະທິບາຍ	ທີ່ບທວນຄືນ 30 ກັນຍາ 2016 ກີບ	ກວດສອບ 31 ທັນວາ 2015 ກີບ
ໜີ້ສິນ ແລະ ທຶນຕົນເອງ			
ໜີ້ສິນໝຸນວຽນ			
ບັນຊີໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		26,666,955,913	26.105.097.350
ສ່ວນຂອງເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ		252.010.000	252.957.748
ໜີ້ຕ້ອງສົ່ງອາກອນ ກຳໄລ		96,652,892	4.171.949.502
ໜີ້ສິນໝຸນວຽນອື່ນໆ		24,861,490,031	25.729.291.057
ລວມໜີ້ສິນໝຸນວຽນອື່ນ		51,877,108,836	56.259.295.657
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ		672,205,396	885.352.182
ລວມໜີ້ສິນບໍ່ໝຸນວຽນ		672,205,396	885.352.182
ລວມໜີ້ສິນ		52,549,314,232	57.144.647.839
ທຶນຂອງຜູ້ຖືຮຸ້ນ			
ທຶນຈົດທະບຽນ			
ທຶນຈົດທະບຽນທີ່ໄດ້ຮັບອະນຸຍາດ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໄປໃບຮຸ້ນລະ 2.000 ກີບ		330.000.000.000	330.000.000.000
ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ		330.000.000.000	330.000.000.000
ສ່ວນເພີ່ມມູນຄ່າຮຸ້ນ		24.735.724.722	24.735.724.722
ກຳໄລສະສົມ			
ຈັດສັນ - ສຳຮອງຕາມກົດໝາຍ		2,940,819,647	2.092.819.578
ຈັດສັນ - ສຳຮອງອື່ນໆ		2,690,819,647	1.842.819.578
ບໍ່ໄດ້ຈັດສັນ		150,693,860,874	151.300.105.001
ດັດແກ້ຈາກການແປງຄ່າ		(30,471,779,318)	(44.907.015.341)
ລວມທຶນ ຂອງຜູ້ຖືຮຸ້ນ		480,589,445,572	465.064.453.538
ລວມໜີ້ສິນ ແລະ ທຶນຕົນເອງ		**533,138,759,804**	**522.209.101.377**

ວັດດານາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

ພັນໄມລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 8 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການ

	30 ກັນຍາ 2016 ກີບ
ລາຍໄດ້ຈາກການຂາຍ	69,517,339,400
ລາຍໄດ້ຈາກການບໍລິການ	320,481,011
ຕົ້ນທຶນໃນການຂາຍ	(58,192,124,713)
ຕົ້ນທຶນໃນການບໍລິການ	(3,795,235)
ກຳໄລລວມຂັ້ນຕົ້ນ	**11,641,900,463**
ລາຍຮັບອື່ນໆ	3,088,357,154
ລາຍຈ່າຍໃນການຂາຍ	(431,184,778)
ລາຍຈ່າຍບໍລິຫານ	9,883,562,014
(ຂາດທຶນ)/ກຳໄລຈາກອັດຕາແລກປ່ຽນ ສຸດທິ	367,753,374
ກຳໄລ ກ່ອນຈ່າຍອາກອນກຳໄລ	**4,783,264,199**
ອາກອນກຳໄລ	(729,235,787)
ກຳໄລສຸດທິສຳລັບງວດ	**4,054,028,412**

ກຳໄລຕໍ່ຮຸ້ນ

ພື້ນຖານກຳໄລຕໍ່ຮຸ້ນ	25

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ອັດດາມາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

ພັນໄມລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

	ບິດ ອະທິບາຍ	30 ກັນຍາ 2016 ກີບ
ລາຍໄດ້ຈາກການຂາຍ		210,697,049,774
ລາຍໄດ້ຈາກການບໍລິການ		718,596,312
ຕົ້ນທຶນໃນການຂາຍ		(182,631,642,775)
ຕົ້ນທຶນໃນການບໍລິການ		(354,938,231)
ກຳໄລລວມຂັ້ນຕົ້ນ		**28,429,065,080**
ລາຍຮັບອື່ນໆ		4,356,193,601
ລາຍຈ່າຍໃນການຂາຍ		(1,298,011,465)
ລາຍຈ່າຍບໍລິຫານ		(21,686,888,044)
(ຂາດທຶນ)/ກຳໄລຈາກອັດຕາແລກປ່ຽນ ສຸດທິ		51,842,544
ກຳໄລ ກ່ອນຈ່າຍອາກອນກຳໄລ		**9,852,201,725**
ອາກອນກຳໄລ		(1,372,201,032)
ກຳໄລສຸດທິສຳລັບງວດ		8,480,000,693
ກຳໄລຕໍ່ຮຸ້ນ		
ພື້ນຖານກຳໄລຕໍ່ຮຸ້ນ		51

ວັດດານາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

ພັນໂນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

	ຍົດ ອະທິບາຍ	ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ ກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ກີບ	ສຳຮອງເງິນ ຕາມກົດໝາຍ ກີບ	ສຳຮອງເງິນ ອື່ນໆ ກີບ	ກຳໄລສະສົມ ຍັງບໍ່ທັນແບ່ງປັນ ກີບ	ຜົດຕ່າງຈາກການ ແປງຄ່າເອກະສານ ລາຍງານການເງິນ ກີບ	ລວມ ກີບ
ຍອດຍົກມາ ວັນທີ 1 ມັງກອນ 2015 (ກວດສອບ)		500.000.000	-	250.000.000	-	136.557.548.375	(225.706.519)	137.081.841.856
ຂັ້ນຕອນຂອງການອອກຮຸ້ນ		329,500,000,000						329,500,000,000
ສ່ວນເພີ່ມຂຶ້ນຂອງການອອກຮຸ້ນ			24,735,724,722					24,735,724,722
ສຳຮອງຕາມກົດໝາຍ				1,842,819,578		(1,842,819,578)		
ສຳຮອງເງິນອື່ນໆ					1,842,819,578.00	(1,842,819,578)		
ກຳໄລສຸດທິພາຍໃນປີ		-	-	-	-	18,428,195,782	-	18,428,195,782
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	(44,681,308,821)	(44,681,308,821)
ຍອດເຫຼືອໃນວັນທີ 30 ມິຖຸນາ 2015 (ທີ່ບທວນຄືນ)		330,000,000,000	24,735,724,722	2,092,819,578	1,842,819,578.00	151,300,105,001	(44,907,015,340)	465,064,453,539
ຍອດຍົກມາ ວັນທີ 1 ມັງກອນ 2016 (ກວດສອບ)		330.000.000.000	24.735.724.722	2.092.819.578	1.842.819.578	151.300.105.001	(44.907.015.340)	465.064.453.538
ສຳຮອງເງິນຕາມກົດໝາຍ		-	-	848,000,069	-	(848,000,069)	-	-
ສຳຮອງເງິນອື່ນໆ		-	-	-	848,000,069	(848,000,069)	-	-
ກຳໄລສຸດທິພາຍໃນປີ		-	-	-	-	8,480,000,693	-	8,480,000,693
ຈ່າຍເງິນປັນຜົນ	11	-	-	-	-	(7,390,244,681)	-	(7,390,244,681)
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	14,435,236,022	14,435,236,022
ຍອດເຫຼືອໃນວັນທີ 30 ກັນຍາ 2016 (ທີ່ບທວນຄືນ)		330.000.000.000	24.735.724.722	2,940,819,647	2,690,819,647	150,693,860,875	(30,471,779,318)	480,589,445,573

ວັດດານາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

ພັນໂພລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 8 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການ

	ບົດ ອະທິບາຍ	ທົບທວນຄືນ 30 ກັນຍາ 2016 ກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:		
ກຳໄລສຸດທິກ່ອນອາກອນກຳໄລສຳລັບປີ ສຳລັບຮອບໄລຍະເວລາ		9,852,201,725
ການດັດແກ້ຈາກກຳໄລສຸດທິໄປເປັນເງິນສົດສຸດທິ		
ຄ່າໜ້ຍຫ້ຽນ	7	3,545,787,990
ຜົດຕ່ຽງຈາກການແປງຄ່າ ເງິນຕາຕ່າງປະເທດ		(1,371,372,931)
ສຳຮອງເຄື່ອງໃນສາງ		(1,784,014,383)
ສຳຮອງໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(1,658,600,870)
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງເງິນທຶນໝຸນວຽນ		8,584,001,531
ການປ່ຽນແປງຈາກ ການດຳເນີນງານຂອງເງິນທຶນໝຸນວຽນ		
- ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(22,563,791,116)
- ເຄື່ອງໃນສາງ		(19,556,595,212)
- ຊັບສິນໝຸນວຽນອື່ນໆ		(3,748,692,528)
- ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(248,244,079)
- ໜີ້ສິນໝຸນວຽນອື່ນໆ		(1,626,280,090)
ກະແສເງິນສົດທີ່ເກີດຈາກການດຳເນີນງານ		(39,159,601,494)
ອາກອນກຳໄລທີ່ຕ້ອງຈ່າຍ		(4.171.949.502)
ເງິນສົດສຸດທິ ຈາກກິດຈະກຳ ການດຳເນີນງານ		(43,331,550,996)
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ		
ຊື້ຊັບສິນບັດຄົງທີ		(6,466,493,893)
ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ		(6,466,493,893)
ກະແສເງິນສົດຈາກກິດຈະກຳການເງິນ		
ລາຍຮັບຈາກເງິນກູ້ຢືມໄລຍະສັ້ນ		-
ການຊຳລະເງິນຄືນທີ່ເປັນກາເກິນບັນຊີທະນາຄານ		-
ການຊຳລະຄືນຂອງເງິນກູ້ຢືມໄລຍະສັ້ນ	9	210,008,333
ຈ່າຍດອກເບ້ຍ		(39,961,423)
ຈ່າຍເງິນປັນຜົນ	11	(7,390,244,681)
ເງິນສົດສຸດທິຈາກກິດຈະກຳທາງການເງິນ		(7,220,197,771)
ເພີ່ມຂຶ້ນ/(ຫຼຸດລົງ)ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(57,018,242,660)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ		96.575.616.427
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		2,479,171,676
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍປີ		42,036,545,444
ລາຍການບໍ່ແມ່ນເງິນສົດ		
ໜີ້ຕ້ອງສົ່ງອື່ນໆຈາກການຊື້ຊັບສິນຖືໜ້ຳ		

ວັດດານາ ສຸຄະບັນດິດ
ກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

ພັທໂນລາ ສຸຄະບັນດິດ
ຮອງກຳມະການຜູ້ຈັດການ
ວັນທີ: 12 ພະຈິກ 2016

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 8 ເຖິງ 16 ເປັນສ່ວນໜຶ່ງຂອງເອກະສານລາຍງານການ

ສະຫຼຸບລວມວິທີການບັນຊີທີ່ສຳຄັນ

1. ພື້ນຖານໃນການກະກຽມ

ໃນ ສປປ ລາວ ຍັງບໍ່ທັນໄດ້ມີມາດຕະຖານບັນຊີອອກຄົບຊຸດ. ມາດຕະຖານດ້ານການບັນຊີລາວ ແມ່ນກຳລັງມີການພັດທະນາພາຍໃຕ້ ກົມບັນຊີ ແລະ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບບັນຊີ (LCPAA). ໃນປັດຈຸບັນ, ບັນດາ ບໍລິສັດ ໄດ້ ນຳໃຊ້ປຶ້ມຄູ່ມື ກ່ຽວກັບ ລະບຽບວິທີປະຕິບັດດ້ານການບັນຊີ ທີ່ອາງອອກໂດຍ ກະຊວງການເງິນ. ປຶ້ມຄູ່ມືດັ່ງກ່າວ ໄດ້ວາງຂໍ້ແນະນຳ ຕາມພື້ນຖານເງິນຄ້າງຮັບ-ຄ້າງຈ່າຍ ເຊິ່ງຍັງມີຄວາມແຕກຕ່າງກັນຫຼາຍ ລະຫວ່າງ ປຶ້ມຄູ່ມືດັ່ງກ່າວ ແລະ ມາດຕະຖານສາກົນດ້ານການລາຍງານການເງິນ ເຊັ່ນ: ຊັບສິນບັດຄົງທີ່ມີຕົວຕົນ, ສັນຍາເຊົ່າ, ຜົນປະໂຫຍດພະນັກງານ, ອາກອນລາຍໄດ້, ການສະແດງເອກະສານລາຍງານການເງິນ, ເຄື່ອງມືທາງດ້ານການເງິນ ແລະ ໃບລາຍງານກະແສເງິນສົດ. ຫຼັກການບັນຊີທີ່ນຳໃຊ້ ມີຄວາມແຕກຕ່າງທີ່ສຳຄັນ ໂດຍທຽບຖານ ຈາກຫຼັກການບັນຊີ ທີ່ຖືກຮັບຮອງເອົາໂດຍທົ່ວໄປ ລວມທັງ ມາດຕະຖານສາກົນ ດ້ານການລາຍງານການເງິນ ທີ່ຮັບຮອງເອົາໃນບາງປະເທດ ແລະ ບາງຂົງເຂດ.

ການສ້າງເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ວາງຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ, ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ສ້າງເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຝ່າຍບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສຳຄັນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນ.

2. ການປ່ຽນຄ່າເງິນຕາຕ່າງປະເທດ

ກ) ສະກຸນເງິນຫຼັກທີ່ນຳໃຊ້ ແລະ ນຳສະເໜີ

ການວັດມູນຄ່າໃນເອກະສານລາຍງານການເງິນຂອງບໍລິສັດແມ່ນຮັບຮູ້ເປັນສະກຸນເງິນບາດ ເຊິ່ງເປັນສະກຸນເງິນຫຼັກທາງເສດຖະກິດໃນການປະຕິບັດງານຂອງບໍລິສັດ.

ເອກະສານລາຍງານການເງິນຂອງ ບໍລິສັດ ໄດ້ນຳສະເໜີເປັນສະກຸນເງິນກີບ (ສະກຸນເງິນທີ່ນຳສະເໜີ), ໂດຍອີງຕາມລະບຽບກົດໝາຍພາຍໃນ, ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ຂໍ້ກຳນົດ ຂອງ ຄະນະກຳມະການ ຄຸ້ມຄອງຫຼັກຊັບ (LSCO).

ບໍລິສັດໄດ້ແປງເອກະສານລາຍງານການເງິນຈາກສະກຸນ ບາດ ເປັນສະກຸນເງິນກີບ, ເຊິ່ງເປັນສະກຸນເງິນທີ່ນຳສະເໜີດັ່ງຕໍ່ໄປນີ້:

- ຊັບສິນ ແລະ ໜີ້ສິນ ໃນໃບສະຫລຸບຊັບສິນບັດທີ່ນຳສະເໜີ ແມ່ນຖືກແປງຄ່າ ດ້ວຍອັດຕາແລກປ່ຽນຂອງມື້ໃບສະຫລຸບຊັບສິນບັດ ຍົກເວັ້ນທຶນຈົດທະບຽນເຊິ່ງຖືກນຳສະເໜີໂດຍອີງຕາມມູນຄ່າຕົ້ນທຶນເດີມ;
- ລາຍຮັບ ແລະ ລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບ ແມ່ນ ຖືກແປງຄ່າ ດ້ວຍອັດຕາແລກປ່ຽນສະເລ່ຍໃນລະຫວ່າງປີ.

- ຜົນແຕກຕ່າງຈາກການແປງຄ່າ ແມ່ນຮັບຮູ້ ແລະ ສະແດງພາຍໃຕ້ຄ່າຜິດຕ່ຽງຈາກການແປງຄ່າເອກະສານລາຍງານການເງິນໃນສ່ວນປ່ຽນແປງທຶນຕົນເອງ ຂອງຜູ້ຖືຮຸ້ນ

ຂ) ລາຍການເຄື່ອນໄຫວ ແລະ ຍອດຄົງເຫຼືອ

- ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດຈະຖືກປ່ຽນຄ່າເປັນສະກຸນເງິນບາດ ໂດຍໃຊ້ອັດຕາແລກ ປ່ຽນຂອງບໍລິສັດ ໃນວັນທີ ທີ່ມີລາຍການນັ້ນເກີດຂຶ້ນ. ກຳໄລ ແລະ ຂາດທຶນ ຈາກອັດຕາແລກປ່ຽນ ຂອງ ການສະສາງບັນດາລາຍການເຄື່ອນໄຫວ ແລະ ການແປງຄ່າ ອັດຕາແລກປ່ຽນໃນທ້າຍປີ ຂອງ ຊັບສິນ ແລະ ໜີ້ສິນ ທາງການເງິນ ໃນສະກຸນເງິນຕາຕ່າງປະເທດແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບ 'ກຳໄລ (ຂາດທຶນ) ສຸດທິ ຈາກອັດຕາແລກປ່ຽນ'. ໂດຍອັດຕາແລກປ່ຽນແມ່ນນຳໃຊ້ຈາກ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL).

3. ທີ່ດິນ ແລະ ອຸປະກອນ

ຊັບສິນມີຕົວຕົນທັງໝົດ, ສິ່ງປຸກສ້າງ ແລະ ອຸປະກອນແມ່ນໄດ້ຖືກບັນທຶກຕາມຄ່າຕົ້ນທຶນເດີມ ຫັກຄ່າຫຼ້ຍຫ້ຽນສະສົມ. ມູນຄ່າຕົ້ນທຶນເດີມ ລວມມີລາຍຈ່າຍໂດຍກົງເພື່ອການໄດ້ມາຂອງລາຍການນັ້ນໆ.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງທີ່ກ່ຽວກັບລາຍການຂອງຊັບສິນບັດດົງທີ່ໄດ້ຖືກເພີ່ມເຂົ້າໃນມູນຄ່າຕາມບັນຊີຂອງຊັບສິນ ເມື່ອ ມີຄວາມແນ່ໃຈວ່າຈະເກີດປະໂຫຍດທາງເສດຖະກິດໃນອານາຄົດເກີນກ່ວາການປະເມີນຜົນການດຳເນີນງານທີ່ມີຢູ່ ຂອງຊັບສິນ ເຂົ້າສູ່ບໍລິສັດ ແລະ ມູນຄ່າຕາມບັນຊີຂອງລາຍຈ່າຍດັ່ງກ່າວ ແມ່ນບໍ່ໄດ້ຮັບຮູ້. ຄ່າສ້ອມແປງ ແລະ ບຳລຸງຮັກສາ ແມ່ນຈະສະແດງໃນໃບລາຍງານຜົນໄດ້ຮັບໃນລະຫວ່າງໄລຍະທາງການເງິນ ເມື່ອລາຍການນັ້ນເກີດຂຶ້ນ.

ຄ່າຫຼ້ຍຫ້ຽນຂອງຊັບສິນແມ່ນ ຄິດໄລ່ດ້ວຍວິທີເສັ້ນຊື່ເພື່ອຕັດຕົ້ນທຶນຂອງແຕ່ລະລາຍການຊັບສິນອອກ, ຍົກເວັ້ນທີ່ດິນທີ່ບໍ່ ມີອາຍຸການນຳໃຊ້, ໂດຍຈະເຫຼືອລາຄາຄົງເຫຼືອທີ່ຄາດວ່າຈະຂາຍໄດ້ ອາຍຸການໃຊ້ງານຂອງຊັບສິນມີດັ່ງລຸ່ມນີ້:

	ປີ
ອາຄານ	20-30
ອຸປະກອນຫ້ອງການ	3 – 5
ເຄື່ອງຈັກ	5
ເຟີນີເຈີ ແລະ ສິ່ງທີ່ຕິດຕັ້ງຖາວອນ	2 – 5
ພາຫະນະ	2 – 5

ມູນຄ່າຄົງເຫຼືອ ແລະ ອາຍຸການນຳໃຊ້ຂອງຊັບສິນແມ່ນໄດ້ຖືກກວດກາຄືນໃໝ່ ແລະ ປັບປຸງໃຫ້ເໝາະສົມໃນທ້າຍຂອງແຕ່ລະ ໄລຍະການລາຍງານ.

ມູນຄ່າຕາມບັນຊີຂອງຊັບສິນແມ່ນຖືກຈົດບັນທຶກທັນທີໃຫ້ເທົ່າກັບມູນຄ່າທີ່ສາມາດເກັບຄືນໄດ້ຖ້າມູນຄ່າຕາມບັນຊີຂອງຊັບສິນສູງກວ່າມູນຄ່າທີ່ຄາດຄະເນ ສາມາດເກັບຄືນໄດ້.

ກຳໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະຖືກກຳນົດ ໂດຍການສົມທຽບ ຂັ້ນຕອນ ກັບມູນຄ່າຕາມບັນຊີ ແລະ ບັນທຶກ ໃນ (ຂາດທຶນ)/ກຳໄລ ສຸດທິ ໃນໃບລາຍງານຜົນໄດ້ຮັບ.

4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ລວມກັນເປັນເງິນສົດໃນມື, ເງິນຝາກທີ່ຖອນຄືນໃນເວລາຕ້ອງການກັບທະນາຄານ ແຕ່ບໍ່ລວມເຖິງເງິນຝາກກັບທະນາຄານທີ່ຝາກຈົນຄົບກຳນົດ ແລະ ເງິນລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ເຊິ່ງມີອາຍຸການ ຄົບກຳນົດໃນ 3 ເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ຊື້.

5. ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າແມ່ນຖືກບັນທຶກຕາມຕີລາຄາຍຸຕິທຳ ຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນຕໍ່ມາ ແມ່ນນຳມູນຄ່າຍັງ ເຫຼືອລົບເງິນທີ່ຫັກເພື່ອໜີ້ສົງໃສຈະເສຍ ໂດຍອີງຕາມການກວດການຸມຄ່າຄ້າງຊຳລະທັງໝົດໃນທ້າຍປີ. ຈຳນວນເງິນທີ່ຫັກ ຂອງໜີ້ສົງໃສຈະເສຍ ແມ່ນສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີ ຂອງໜີ້ຕ້ອງຮັບ ແລະ ມູນຄ່າທີ່ຄາດວ່າຈະເກັບຄືນໄດ້. ໜີ້ ເສຍແມ່ນຈະຖືກສະສາງໃນປີເຊິ່ງຈະຖືກລະບຸໃນກຳໄລ ຫຼື ຂາດທຶນພາຍໃຕ້ລາຍຈ່າຍບໍລິຫານ.

6. ເຄື່ອງໃນສາງ

ເຄື່ອງໃນສາງສະແດງອອກ ຕາມລາຄາທີ່ຕ່ຳກວ່າ ລາຄາຕົ້ນທຶນ ແລະ ລາຄາຂາຍອອກສຸດທິ. ການຄິດໄລ່ຕົ້ນທຶນຈ່າຍອອກ ສາງ ໄດ້ນຳໃຊ້ວິທີສະເລ່ຍຕາມນ້ຳໜັກ. ຕົ້ນທຶນຊື້ ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງ ທີ່ຕິດພັນກັບການຊື້ ເຄື່ອງໃນສາງ ເຊັ່ນ: ຄ່າຂົນສົ່ງ ລິບ ທຸກສ່ວນຫຼຸດທີ່ໄດ້ຮັບ. ລາຄາຂາຍອອກສຸດທິ ແມ່ນລາຄາທີ່ເຄື່ອງໃນສາງ ສາມາດຂາຍ ອອກໃນຮອບວຽນ ປົກກະຕິຂອງວິສາຫະກິດ ຫຼັງຈາກຫັກຕົ້ນທຶນໃນການຂາຍອອກ. ຄ່າສູນເສຍມູນຄ່າເກີດຂຶ້ນ, ກໍລະນີ ການພົ້ນສະໄໝ, ເສຍຄຸນເຄື່ອງໃນສາງອື່ນໆ.

7. ເງິນກູ້ຢືມ

ເງິນກູ້ຢືມ ຈະຖືກຮັບຮູ້ຕາມມູນຄ່າກູ້ຢືມເບື້ອງຕົ້ນຂອງເງິນທີ່ໄດ້ຮັບ.

ເງິນກູ້ຢືມ ຈັດເປັນໜີ້ສິນໝຸນວຽນ ເວັ້ນເສຍແຕ່ ບໍລິສັດ ບໍ່ມີເງື່ອນໄຂ ໂດຍການເຍື້ອນຊຳລະໜີ້ສິນ ຢ່າງໜ້ອຍ 12 ເດືອນ ຫຼັງຈາກມື້ໃບສະຫລຸບຊັບສິນບັດ.

8. ເງິນແຮ

ເງິນແຮ ຖືກບັນທຶກບັນຊີ ໃນເວລາມີພັນທະໃນປະຈຸບັນຕາມກົດໝາຍ ຫຼື ພັນທະການກໍ່ສ້າງ ເຊິ່ງເກີດຈາກເຫດການຜ່ານ ມາ, ເປັນໄປໄດ້ວ່າ ແຫຼ່ງຊັບພະຍາກອນຈະໄຫຼອອກເພື່ອສະສາງພັນທະ ແລະ ຈຳນວນເງິນສາມາດຄາດຄະເນຢ່າງໜ້າເຊື່ອ ຖືໄດ້, ຍົກເວັ້ນເງິນແຮ ເພື່ອຜົນປະໂຫຍດພະນັກງານ ຕາມທີ່ໄດ້ອະທິບາຍຂໍ້ 2.11.

9. ການຮັບຮູ້ລາຍຮັບ

ລາຍຮັບລວມມີມູນຄ່າໃນໃບເກັບເງິນສຳຫຼັບການຂາຍສິນຄ້າສຸດທິຂອງສ່ວນຫຼຸດທີ່ໄດ້ຮັບ. ລາຍຮັບຈາກການຂາຍສິນຄ້າຮັບຮູ້ເມື່ອມີຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້.

ການຂາຍສິນຄ້າ ທີ່ມີການຕິດຕັ້ງ ແລະ ການກວດກາສະພາບຂອງສິນຄ້າ ແມ່ນໄດ້ຮັບຮູ້ເມື່ອຜູ້ຊື້ໄດ້ຮັບສິນຄ້າ, ການຕິດຕັ້ງ ແລະ ການກວດກາສຳເລັດ.

ລາຍຮັບອື່ນໆແມ່ນຮັບຮູ້ອີງຕາມພື້ນຖານດັ່ງນີ້:

- ລາຍຮັບຈາກດອກເບ້ຍແມ່ນຮັບຮູ້ຕາມອັດຕາພື້ນຖານຄິດໄລ່ຕາມໄລຍະເວລາ, ຄິດໄລ່ຈາກບັນຊີເງິນຕົ້ນທີ່ຍັງຄ້າງ ແລະ ອັດຕາດອກເບ້ຍໃນຊ່ວງເວລາທີ່ກຳນົດ, ເມື່ອມີຄວາມແນ່ນອນວ່າລາຍໄດ້ຈະເກີດຂຶ້ນກັບບໍລິສັດ.
- ລາຍຮັບອື່ນໆແມ່ນຮັບຮູ້ໃນເກນຄ້າງຮັບຄ້າງຈ່າຍ.

10. ອາກອນ

ບໍລິສັດ ບັນທຶກ ອາກອນລາຍໄດ້ ຕາມຄ້າງຮັບຄ້າງຈ່າຍ. ບໍລິສັດ ບໍ່ໄດ້ບັນທຶກ ອາກອນລາຍໄດ້ຕ້ອງຈ່າຍ ຫຼື ຕ້ອງຮັບ ໃນ ອະນາຄົດ ເຊິ່ງເກີດຈາກສ່ວນຜິດຕ່າງຊົ່ວຄາວ. ລາຍຈ່າຍອາກອນແມ່ນຮັບຮູ້ບົນພື້ນຖານຜົນການດຳເນີນງານໃນປີ ຫຼັງ ຄັດແກ້ ບໍ່ຫັກລາຍຈ່າຍ ແລະ ລາຍການເຄື່ອນໄຫວອື່ນໆ ຕາມກົດໝາຍວ່າດ້ວຍ ສ່ວຍສາອາກອນ ແລະ ອັດຕາອາກອນ. ພາຍໃຕ້ລະບຽບການບັນຊີ ແລະ ກົດໝາຍສ່ວຍສາອາກອນ, ລາຍຈ່າຍອາກອນ ໃນປີ ແມ່ນໄດ້ຄິດໄລ່ຕາມ ພື້ນຖານລາຍຮັບ ຂອງບໍລິສັດ.

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາລາຍລະອຽດຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ, ໃນການກວດກາຄືນດັ່ງກ່າວອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ ບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມເຕີມ ຫຼື ຮັບຄືນ ໃນຄວາມຈຳເປັນ. ເຫດນີ້ຈະມີຜົນໃນການຈ່າຍ ເງິນ ຫຼື ຮັບຄືນ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍອາກອນລາຍໄດ້ໃນປີທີ່ມີການກວດກາໄດ້ສຳເລັດ.

11. ຜົນປະໂຫຍດໃຫ້ພະນັກງານ

ອີງຕາມກົດໝາຍແຮງງານປະກັນສັງຄົມລົງວັນທີ 24 ທັນວາ 2013. ບໍລິສັດ ແລະ ພະນັກງານ ຍັງໄດ້ປະກອບສ່ວນເງິນ ອຸດໜູນເຂົ້າອົງການປະກັນສັງຄົມ 6% ແລະ 5.5% ຂອງເງິນເດືອນພະນັກງານ. ເງິນເດືອນພື້ນຖານໃນແຕ່ລະເດືອນ ເປັນ ພື້ນຖານໃນການຄິດໄລ່, ແຕ່ບໍ່ເກີນ 2 ລ້ານກີບ.

ອີງຕາມກົດໝາຍ ເມື່ອພະນັກງານເຂົ້າບຳນານ ຫລື ບໍ່ເຖິງເກນໃນກົດໝາຍແຮງງານ, ສະນັ້ນບໍລິສັດຈະໄດ້ມີພັນທະດ້ານ ເງິນບຳນານຕໍ່ກັບພະນັກງານ.

ບໍ່ມີການຕັ້ງສຳຮອງເງິນສະຫວັດດີການໃຫ້ພະນັກງານພາຍໃນປີ.ໜີ້ຕ້ອງສິ່ງແມ່ນຖືກຮັບຮູ້ໃນເບື້ອງໃບສະຫລຸບຊັບສິມບັດ ແລະ ບັນດາລາຍຈ່າຍທີ່ກ່ຽວຂ້ອງແມ່ນຮັບຮູ້ຢູ່ໃນໃບລາຍງານຜົນໄດ້ຮັບອີງຕາມຈຳນວນເກີດຂຶ້ນຕົວຈິງ.

9. ການຮັບຮູ້ລາຍຮັບ

ລາຍຮັບລວມມີມູນຄ່າໃນໃບເກັບເງິນສຳຫຼັບການຂາຍສິນຄ້າສຸດທິຂອງສ່ວນຫຼຸດທີ່ໄດ້ຮັບ. ລາຍຮັບຈາກການຂາຍສິນຄ້າຮັບຮູ້ເມື່ອມີຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້.

ການຂາຍສິນຄ້າ ທີ່ມີການຕິດຕັ້ງ ແລະ ການກວດກາສະພາບຂອງສິນຄ້າ ແມ່ນໄດ້ຮັບຮູ້ເມື່ອຜູ້ຊື້ໄດ້ຮັບສິນຄ້າ, ການຕິດຕັ້ງ ແລະ ການກວດກາສຳເລັດ.

ລາຍຮັບອື່ນໆແມ່ນຮັບຮູ້ອີງຕາມພື້ນຖານດັ່ງນີ້:

- ລາຍຮັບຈາກດອກເບ້ຍແມ່ນຮັບຮູ້ຕາມອັດຕາພື້ນຖານຄິດໄລ່ຕາມໄລຍະເວລາ, ຄິດໄລ່ຈາກບັນຊີເງິນຕົ້ນທີ່ຍັງຄ້າງ ແລະ ອັດຕາດອກເບ້ຍໃນຊ່ວງເວລາທີ່ກຳນົດ, ເມື່ອມີຄວາມແນ່ນອນວ່າລາຍໄດ້ຈະເກີດຂຶ້ນກັບບໍລິສັດ.
- ລາຍຮັບອື່ນໆແມ່ນຮັບຮູ້ໃນເກນຄ້າງຮັບຄ້າງຈ່າຍ.

10. ອາກອນ

ບໍລິສັດ ບັນທຶກ ອາກອນລາຍໄດ້ ຕາມຄ້າງຮັບຄ້າງຈ່າຍ. ບໍລິສັດ ບໍ່ໄດ້ບັນທຶກ ອາກອນລາຍໄດ້ຕ້ອງຈ່າຍ ຫຼື ຕ້ອງຮັບ ໃນ ອະນາຄົດ ເຊິ່ງເກີດຈາກສ່ວນຜິດຕ່າງຊົ່ວຄາວ. ລາຍຈ່າຍອາກອນແມ່ນຮັບຮູ້ບົນພື້ນຖານຜົນການດຳເນີນງານໃນປີ ຫຼັງ ຄັດແກ້ ບໍ່ຫັກລາຍຈ່າຍ ແລະ ລາຍການເຄື່ອນໄຫວອື່ນໆ ຕາມກົດໝາຍວ່າດ້ວຍ ສ່ວຍສາອາກອນ ແລະ ອັດຕາອາກອນ. ພາຍໃຕ້ລະບຽບການບັນຊີ ແລະ ກົດໝາຍສ່ວຍສາອາກອນ, ລາຍຈ່າຍອາກອນ ໃນປີ ແມ່ນໄດ້ຄິດໄລ່ຕາມ ພື້ນຖານລາຍຮັບ ຂອງບໍລິສັດ.

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາລາຍລະອຽດຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ, ໃນການກວດກາຄືນດັ່ງກ່າວອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ ບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມເຕີມ ຫຼື ຮັບຄືນ ໃນຄວາມຈຳເປັນ. ເຫດນີ້ຈະມີຜົນໃນການຈ່າຍ ເງິນ ຫຼື ຮັບຄືນ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍອາກອນລາຍໄດ້ໃນປີທີ່ມີການກວດກາໄດ້ສຳເລັດ.

11. ຜົນປະໂຫຍດໃຫ້ພະນັກງານ

ອີງຕາມກົດໝາຍແຮງງານປະກັນສັງຄົມລົງວັນທີ 24 ທັນວາ 2013. ບໍລິສັດ ແລະ ພະນັກງານ ຍັງໄດ້ປະກອບສ່ວນເງິນ ອຸດໜູນເຂົ້າອົງການປະກັນສັງຄົມ 6% ແລະ 5.5% ຂອງເງິນເດືອນພະນັກງານ. ເງິນເດືອນພື້ນຖານໃນແຕ່ລະເດືອນ ເປັນ ພື້ນຖານໃນການຄິດໄລ່, ແຕ່ບໍ່ເກີນ 2 ລ້ານກີບ.

ອີງຕາມກົດໝາຍ ເມື່ອພະນັກງານເຂົ້າບຳນານ ຫລື ບໍ່ເຖິງເກນໃນກົດໝາຍແຮງງານ, ສະນັ້ນບໍລິສັດຈະໄດ້ມີພັນທະດ້ານ ເງິນບຳນານຕໍ່ກັບພະນັກງານ.

ບໍ່ມີການຕັ້ງສຳຮອງເງິນສະຫວັດດີການໃຫ້ພະນັກງານພາຍໃນປີ.ໜີ້ຕ້ອງສິ່ງແມ່ນຖືກຮັບຮູ້ໃນເບື້ອງໃບສະຫລຸບຊັບສິມບັດ ແລະ ບັນດາລາຍຈ່າຍທີ່ກ່ຽວຂ້ອງແມ່ນຮັບຮູ້ຢູ່ໃນໃບລາຍງານຜົນໄດ້ຮັບອີງຕາມຈຳນວນເກີດຂຶ້ນຕົວຈິງ.